ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ເລກທີ 308 /ຈຂ.ຊຍ
ໄຊຍະບູລີ, ວັນທີ 4/4/ 2018

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງ, ນຳໃຊ້ ແລະ ອານຸລັກ ຊັບພະຍາກອນທຳມະຊາດ ທີ່ເປັນຢາ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015. ພາກທີ III, ໝວດທີ IV ມາດຕາ 20 : ສິດ, ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012. ພາກທີ IV, ໝວດທີ 5, ມາດຕາ 77: ການສ້າງຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳຂອງເຈົ້າແຂວງ, ເຈົ້າຄອງນະຄອນ,ເຈົ້າເມືອງ ແລະ ຫົວໜ້າເທດສະບານ.
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບປັບປຸງ ເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011.

## ເຈົ້າແຂວງໄຊຍະບູລີ ຕົກລົງ :

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ໄດ້ກຳນົດຫຼັກການພື້ນຖານ, ບັນດາມາດຕະການ ກ່ຽວກັບການຄຸ້ມຄອງ, ການຂຸດຄົ້ນ, ການຜະລິດ, ການປູກ, ການລ້ຽງ, ການອານຸລັກ ແລະ ການນຳໃຊ້ຊັບພະຍາກອນ ທຳມະຊາດທີ່ເປັນຢາ ເພື່ອປົກປັກຮັກສາ ແຫຼ່ງຊັບພະຍາກອນທຳມະຊາດ ທີ່ເປັນຢາ, ຄວາມອຸດົມສົມບູນ ຂອງທຳມະຊາດ ແລະ ຮັບປະກັນ ການນຳໃຊ້ຊັບພະຍາກອນ ທຳມະຊາດທີ່ເປັນຢາໃຫ້ຍືນຍົງ;

**ມາດຕາ 2. ນິຍາມ**

ຊັບພະຍາກອນທຳມະຊາດ ທີ່ເປັນຢາ ຫຼື ຊີວະນາໆພັນທີ່ເປັນຢາ: ແມ່ນເພສັດຊັບພະຍາກອນ ທຳມະຊາດ ຫຼື ວັດຖຸໃດໜຶ່ງ ທີ່ໄດ້ມາຈາກແຫຼ່ງທຳມະຊາດເຊັ່ນ: ພືດ, ຕົ້ນໄມ້, ສັດ ແລະ ແຮ່ທາດ ທີ່ສາມາດໃຊ້ເປັນວັດຖຸດິບ ເພື່ອມາຜະລິດເປັນຢາພື້ນເມືອງ.

**ມາດຕາ 3. ອະທິບາຍຄຳສັບ**

1. ຢາພື້ນເມືອງ: ແມ່ນຜະລິດຕະພັນຢາ ທີ່ໄດ້ມາຈາກພືດຕົ້ນໄມ້, ສັດ ແລະ ແຮ່ທາດ ຫຼື ພາກສ່ວນໃດໜຶ່ງຂອງພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາຊຶ່ງໄດ້ນຳມາປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນລັກສະນະ ແລະ ຄວາມແຮງ ຂອງການອອກລິດ ນັ້ນໄດ້ຮັບການພິສູດແລ້ວ ຫຼື ຍັງບໍ່ທັນໄດ້ຮັບການພິສູດ ດ້ວຍວິທະຍາສາດ ປະຈຸບັນ, ແຕ່ຕ້ອງຖືກຮັບຮູ້ ຈາກກະຊວງສາທາລະນະສຸກ.
2. ເພສັດ: ໝາຍເຖິງພືດພັນນາໆຊະນິດ ແລະ ສັດນາໆຊະນິດທີ່ມີໃນທຳມະຊາດ
3. ຊີວະນາໆພັນ: ແມ່ນຄວາມຫຼາກຫຼາຍ ຂອງລະບົບນິເວດ, ຊະນິດ ແລະ ແນວພັນ ຂອງສິ່ງທີ່ມີຊີວິດເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນທຳມະຊາດໃດໜຶ່ງ.
4. ລະບົບນິເວດວິທະຍາ: ແມ່ນສາຍກ່ຽວພັນຊຶ່ງກັນ ແລະ ກັນທາງບວກ ແລະ ທາງລົບ ລະຫວ່າງສິ່ງທີ່ມີຊີວິດແລະ ບໍ່ມີຊີວິດ ທີ່ດຳງຕົວຢູ່ຕາມທຳມະຊາດ.
5. ຊັບພະຍາກອນທຳມະຊາດ ທີ່ເປັນຢາ: ແມ່ນເພສັດຊັບພະຍາກອນ ທຳມະຊາດ ຫຼື ວັດຖຸໃດໜຶ່ງ ທີ່ໄດ້ມາຈາກແຫຼ່ງທຳມະຊາດ ທີ່ສາມາດໃຊ້ເປັນວັດຖຸດິບ ເພື່ອມາຜະລິດເປັນຢາ.
6. ສວນອານຸລັກຢາພື້ນເມືອງ: ແມ່ນສະຖານທີ່ເຂດອານຸລັກ ຊັບພະຍາກອນທຳມະຊາດ ທີ່ເປັນຢາພື້ນເມືອງເພື່ອການອານຸລັກ, ເພື່ອການສຶກສາຄົ້ນຄ້ວາ ດ້ານຊັບພະຍາກອນທຳມະຊາດ ທີ່ເປັນຢາພື້ນເມືອງ ມານຳໃຊ້ເຂົ້າໃນການປ້ອງກັນ ແລະ ປິ່ນປົວພະຍາດ ເຊິ່ງໄດ້ຮັບອານຸຍາດ ແລະ ປະກາດໃຊ້ ຢ່າງເປັນທາງການໂດຍໄດ້ມອບໝາຍ ໃຫ້ອົງການຈັດຕັ້ງຂອງລັດ ເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາເພື່ອໃຫ້ມີການນຳໃຊ້ ແບບຍືນຍົງ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ມີຂອບເຂດການນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທຸກຂັ້ນ, ຜູ້ປະກອບການຕ່າງໆ, ຫົວໜ່ວຍທຸລະກິດ ແລະ ປະຊາຊົນ ຢູ່ພາຍໃນແຂວງໄຊຍະບູລີ

## ໝວດທີ 2
## ການຄຸ້ມຄອງ, ການກວດກາ ແລະ ການປົກປັກຮັກສາ

**ມາດຕາ 5. ຫຼັກການພື້ນຖານ ກ່ຽວກັບການການຄຸ້ມຄອງ**

ຫຼັກການພື້ນຖານກ່ຽວກັບການຄຸ້ມຄອງ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ ມີຄື:

1. ຖືເອົາການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ເປັນວຽກງານຕົ້ນຕໍ, ຖືວຽກງານປູກລ້ຽງ ທົດແທນຄືນ ເປັນວຽກງານສຳຄັນ.
2. ການຂຸດຄົ້ນຊັບພະຍາກອນ ທຳມະຊາດທີ່ເປັນຢາ ທີ່ຕິດພັນກັບການສຶກສາຄົ້ນຄວ້າ, ການຜະລິດຢາພື້ນເມືອງ ແລະ ຢາຫຼວງ ຕ້ອງມີແຜນການຄຸ້ມຄອງ ແລະ ປົກປັກຮັກສາ.
3. ບຸກຄົນ, ອົງການຈັດຕັ້ງຢູ່ໃນ ສ.ປ.ປ.ລາວ ແລະ ພາກສ່ວນນຳໃຊ້ ທີ່ໄດ້ຮັບຜົນປະໂຫຍດ ມີໜ້າທີ່ປົກປັກຮັກສາ ແຫຼ່ງຊັບພະຍາກອນ ທຳມະຊາດທີ່ເປັນຢາ ຂອງຊາດ.

4. ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ກໍ່ຄວາມເສຍຫາຍ ຕໍ່ຊັບພະຍາກອນທຳມະຊາດ ທີ່ເປັນຢາ ແລະ ແຫຼ່ງເພສັດຊັບພະຍາກອນ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ.
5. ຕ້ອງນຳໃຊ້ຊັບພະຍາກອນ ທຳມະຊາດທີ່ເປັນຢາ ຢ່າງມີແຜນການ ແລະ ມີປະສິດທິຜົນ ເພື່ອການພັດທະນາ ຊີວະນາໆພັນແບບຍືນຍົງ.

**ມາດຕາ 6. ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ເປັນຢາ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຂຸດຄົ້ນ, ການລ່າສັດທີ່ເປັນຢາ, ການຂົນສົ່ງ, ການເກັບຮັກສາ, ການປຸງແຕ່ງ ແລະ ການນຳໃຊ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາຕ້ອງໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດ ຕາມກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, ກົດໝາຍປ່າໄມ້, ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ:

1. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ການລ່າສັດທີ່ເປັນຢາ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ ແລະ ກະຊວງກະສິກຳ ແລະ ປ່າໄມ້.
2. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ການລ່າສັດທີ່ເປັນຢາ ຕ້ອງໄດ້ສ້າງແຜນການເກັບກູ້ ແລະ ປູກລ້ຽງແທນ ຊຶ່ງແຜນການດັ່ງກ່າວ ຕ້ອງໄດ້ຮັບອະນຸມັດ ຈາກກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ.
3. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ສັດທີ່ເປັນຢາ ຕ້ອງປະຕິບັດຕາມຫຼັກການ ແລະ ລະບຽບການທີ່ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງວາງອອກ.
4. ທຸກການນຳເຂົ້າ ແລະ ສົ່ງອອກຊະນິດແນວພັນພືດ, ສັດ, ແມງໄມ້, ຈຸລິນຊີ ແລະ ແຮ່ທາດ ທີ່ເປັນຢາຕ່າງໆ ຕ້ອງປະຕິບັດ ຕາມລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ເພສັດຊັບພະຍາ ກອນຢ່າງເຂັ້ມງວດ. ທຸກໆຊະນິດຢາທີ່ຈະສົ່ງອອກ ຕ້ອງມີການປູກລ້ຽງທົດແທນ, ຖ້າວ່າບໍ່ມີການປູກລ້ຽງທົດແທນ ຈະບໍ່ອະນຸຍາດໃຫ້ສົ່ງອອກ.
5. ລັດສົ່ງເສີມປະຊາຊົນ ບັນດາເຜົ່າລົງທຶນ ໃນການປູກພືດ ແລະ ລ້ຽງສັດ ທີ່ເປັນຢາ ເພື່ອເປັນເສດຖະກິດສິນຄ້າພາຍໃນ ຫຼື ສົ່ງອອກ ແລະ ເປັນອາຊີບທົດແທນ ການປູກຝິ່ນ ແລະ ຢຸດຕິ ການຖາງປ່າເຮັດໄຮ່.

**ມາດຕາ 7. ອົງການຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ເປັນຢາ**

1. ຄະນະກຳມະການກວດກາ ແລະ ຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ເປັນຢາຂັ້ນແຂວງ
2. ພະແນກ ສາທາລະນະສຸກ
3. ພະແນກ ກະສິກຳ ແລະ ປ່າໄມ້
4. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
5. ອົງການປົກຄອງເມືອງ
6. ຫ້ອງການ ສາທາລະນະສຸກເມືອງ
7. ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ
8. ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
9. ອົງການປົກຄອງບ້ານ

**ມາດຕາ 8. ການຕິດຕາມກວດກາ**

1. ຕິດຕາມກວດກາ ການເຄື່ອນໄຫວກ່ຽວກັບການປູກ, ການລ້ຽງ, ການປົກປັກຮັກສາ, ການຂຸດຄົ້ນ, ການເກັບຊື້, ການຜະລິດ, ການຈຳໜ່າຍ, ການສົ່ງອອກ, ການນຳເຂົ້າ, ການຂາຍຍົກ, ການຂາຍຍ່ອຍ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ລວມທັງຜະລິດຕະພັນຊັບພະ

ຍາກອນ ທຳມະຊາດທີ່ເປັນຢາ ເພື່ອໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ ແນໃສ່ຮັບປະກັນທາງດ້ານຄຸນນະພາບ ໃຫ້ມີຄວາມປອດໄພ, ນຳໃຊ້ຢ່າງສົມເຫດສົມຜົນ, ຊັບພະຍາກອນທຳມະຊາດ ທີ່ເປັນຢາບໍ່ສູນພັນ ແລະ ຖືກນຳໃຊ້ໄດ້ແບບຍືນຍົງ.

2. ຄະນະກຳມະການກວດກາ ແລະ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ເປັນຢາຂັ້ນແຂວງ ຕ້ອງໄດ້ລົງຕິດຕາມກວດກາ ຜູ້ດຳເນີນກິດຈະການທີ່ ໄດ້ອະນຸຍາດ ຢ່າງໜ້ອຍ 3 ເດືອນຕໍ່ຄັ້ງ ເພື່ອກວດກາການຈັດຕັ້ງປະຕິບັດຖືກຕ້ອງ ຕາມຂັ້ນຕອນທີ່ໄດ້ກຳນົດ ໃນການອະນຸຍາດ, ພ້ອມທັງລາຍງານ ຕໍ່ຂັ້ນ ເທິງຮັບຊາບ ແລະ ມີທິດຊີ້ນຳ ໃນຂັ້ນຕໍ່ໄປຢ່າງເປັນປົກກະຕິ.

**ມາດຕາ 9. ຮູບການກວດກາ**

1. ການກວດກາ ຕາມປົກກະຕິ ແມ່ນການກວດກາທີ່ດຳເນີນ ໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນຊຶ່ງຕ້ອງແຈ້ງ ໃຫ້ຜູ້ຖືກກວດກາຊາບລ່ວງໜ້າ
3. ການກວດກາ ແບບກະທັນຫັນ ແມ່ນການກວດກາ ໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງ ໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

**ມາດຕາ 10. ການປົກປັກຮັກສາ**

ອົງການຈັດຕັ້ງທຸກຂັ້ນ ຂອງລັດທີ່ກ່ຽວຂ້ອງ ມີໜ້າທີ່ຊີ້ນຳ, ນຳພາ, ຄຸ້ມຄອງ, ສົ່ງເສີມການປົກປັກຮັກສາ ຊັບພະຍາກອນທຳມະຊາດ ທີ່ເປັນຢາ, ການປູກຕົ້ນໄມ້ເປັນຢາ ແລະ ການລ້ຽງສັດ ທີ່ເປັນຢາ ດ້ວຍການເຜີຍ ແຜ່ຂໍ້ມູນຂ່າວສານ, ສຶກສາອົບຮົມ ໃຫ້ປະຊາຊົນເຫັນໄດ້ ຄວາມສຳຄັນ, ຄຸນຄ່າ ຂອງຊັບພະຍາກອນທຳມະຊາດ ທີ່ເປັນຢາ ໃນການຮັກສາສຸຂະພາບ ຂອງປະຊາຊົນ ແລະ ການພັດທະນາເສດຖະກິດ ຂອງຊາດ ແລະ ຜົນປະໂຫຍດ ທີ່ພົນລະເມືອງຈະໄດ້ຮັບ ຈາກການເອົາໃຈໃສ່ ອານຸລັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນ ທຳມະຊາດທີ່ເປັນຢາ.

ພົນລະເມືອງລາວ ແລະ ຄົນຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນ ທຸລະກິດ ແລະ ຜະລິດຢາຈາກຊັບພະຍາກອນ ທຳມະຊາດທີ່ເປັນຢາ ມີພັນທະປົກປັກຮັກສາ ແຫຼ່ງຊັບພະຍາກອນດັ່ງກ່າວ, ມີໜ້າທີ່ປູກ ແລະ ລ້ຽງທົດແທນ ເພື່ອບໍ່ໃຫ້ມີການບົກແຫ້ງ.

**ມາດຕາ 11. ການຂຸດຄົ້ນ ຊັບພະຍາກອນທຳມະຊາດທີ່ເປັນຢາ**

ການຂຸດຄົ້ນ, ເກັບກູ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ຕ້ອງມີວິທີການ ແລະ ນຳໃຊ້ ເຕັກນິກທີ່ເໝາະສົມ ພ້ອມທັງຖືກລະດູການ ຊຶ່ງມີຜົນກະທົບໜ້ອຍທີ່ສຸດ ຕໍ່ການຂະຫຍາຍພັນ ຂອງ ພືດ ແລະ ສັດເພື່ອຄວາມຍືນ ຍົງຄົງຕົວ ຂອງແຫຼ່ງຊັບພະຍາກອນທຳມະຊາດ ທີ່ເປັນຢາ.

**ມາດຕາ 12. ການຈັດຊະນິດ ປະເພດ ຊັບພະຍາກອນທຳມະຊາດ ທີ່ເປັນຢາ**

ຊັບພະຍາກອນທຳມະຊາດ ທີ່ເປັນຢາ ຫຼື ຊີວະນາງພັນ ທີ່ເປັນຢາປະກອບມີ 70 ຊະນິດ, ແຕ່ລະຊະນິດ ໄດ້ມີບັນຊີຊັບພະຍາກອນ ທຳມະຊາດທີ່ເປັນຢາ ນອກຈາກ 70 ຊະນິດ ທີ່ກ່າວມາຂ້າງເທິງນັ້ນ, ຖ້າຫາກປະຊາຊົນ ໄດ້ມີການຂຸດຄົ້ນນຳໃຊ້ ວ່າເປັນຢາ ກໍ່ຖື ວ່າຈະໄດ້ຮັບຮອງວ່າ ເປັນຢາພື້ນເມືອງເຊັ່ນກັນ.

**ມາດຕາ 13. ການຂຶ້ນທະບຽນ ສວນອານຸລັກຊັບພະຍາກອນ ທຳມະຊາດທີ່ເປັນຢາ**

ຜ່ານການເດີນສຳຫຼວດ ປະເມີນຜົນ ຂອງວິຊາການແລ້ວໄດ້ເຮັດໃບສະເໜີ ແລະ ລາຍງານ ຜົນການສຳຫຼວດ ໄປຍັງທ່ານເຈົ້າແຂວງ ຈຶ່ງໄດ້ອອກຂໍ້ຕົກລົງ ເຫັນດີໃຫ້ກຳນົດເອົາເຂດແດນນັ້ນ ເປັນສວນອານຸລັກຊັບພະຍາກອນ ທຳມະຊາດທີ່ເປັນຢາ.

## ໝວດທີ 3
## ການອານຸລັກ ແລະ ນຳໃຊ້ ຊັບພະຍາກອນ ທຳມະຊາດທີ່ເປັນຢາ

**ມາດຕາ 14. ການອານຸລັກ**

1. ອານຸລັກ ເພື່ອເປັນສະຖານທີ່ສຶກສາຄົ້ນຄ້ວາ ດ້ານຊີວະນາໆພັນທີ່ເປັນຢາ.
2. ອານຸລັກ ຕິດພັນກັບການທ່ອງທ່ຽວ ຊັບພະຍາກອນທຳມະຊາດ ທີ່ເປັນຢາ.
3. ອານຸລັກ ເພື່ອເຮັດໃຫ້ຊັບພະຍາກອນ ທຳມະຊາດ ມີຄວາມອຸດົມສົມບູນ, ບໍ່ສູນພັນ ແລະ ຖືກນຳໃຊ້ໄດ້ຢ່າງຍາວນານ.

**ມາດຕາ 15. ການນຳໃຊ້**

1. ນຳໃຊ້ເຂົ້າໃນການປິ່ນປົວ.
2. ນຳໃຊ້ເພື່ອເປັນການສຶກສາຄົ້ນຄ້ວາວິໄຈ.
3. ໃຊ້ເຂົ້າໃນໂຮງງານປຸງແຕ່ງຕ່າງໆ ຜະລິດເປັນຢາ ຫຼື ຜະລິດເປັນສິນຄ້າ ຊົມໃຊ້ພາຍໃນ ແລະ ສົ່ງອອກ.
4. ໃຊ້ໃນຄົວເຮືອນ.

**ມາດຕາ 16. ການປະກອບເອກະສານ ເພື່ອຂໍຂຸດຄົ້ນ, ນຳໃຊ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາ**

1. ໃບສະເໜີ ຂໍຂຸດຄົ້ນ, ນຳໃຊ້ຊັບພະຍາກອນທຳມະຊາດ ທີ່ເປັນຢາ.
2. ບົດວິພາກເສດຖະກິດ ລະອຽດລວມທັງແຜນການ ປູກທົດແທນ.
3. ໃບຢັ້ງຢືນທີ່ຢູ່.
4. ສຳເນົາເອກະສານ ໃບຢັ້ງຢືນວິຊາຊີບ ສຳລັບຫ້ອງປຸງແຕ່ງ, ໂຮງງານປຸງແຕ່ງຢາພື້ນເມືອງ ແລະ ໂຮງງານຖອດຣົດຢາພື້ນເມືອງ.
5. ໃບແຈ້ງໂທດ.
6. ໃບຢັ້ງຢືນຮັບຮອງ ການປະເມີນຜົນກະທົບ ທາງດ້ານສິ່ງແວດລ້ອມ.

**ມາດຕາ 17. ຂັ້ນຕອນ ໃນການອະນຸຍາດ**

ພາຍຫຼັງຫ້ອງການແຜນການ - ການລົງທຶນເມືອງ ໄດ້ຮັບສຳນວນເອກະສານຄຳຮ້ອງ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 16, ພະນັກງານກ່ຽວຂ້ອງ ຕ້ອງໄດ້ກວດກາເອກະສານ ໃຫ້ຄົບຖ້ວນ, ຖ້າເຫັນວ່າເອກະສານ ຖືກຕ້ອງຄົບຖ້ວນ ແມ່ນດຳເນີນຕາມຂັ້ນຕອນດັ່ງນີ້:

1. ຫ້ອງການແຜນການ - ການລົງທຶນເມືອງ ສົ່ງເອກະສານທັງໝົດ ໄປພະແນກແຜນການ-ການລົງທຶນ ພະແນກ ແຜນການ - ການລົງທຶນ ກວດກາເອກະສານ ເມື່ອເຫັນວ່າເອກະສານ ຫາກກ່ຽວຂ້ອງກັບຂະແໜງການໃດ, ພະແນກການໃດ, ຈະໄດ້ນຳສົ່ງເອກະສານດັ່ງກ່າວ ໄປຫາຂະແໜງການພະແນກການ ທີ່ກ່ຽວຂ້ອງນັ້ນ ເພື່ອມີຄຳເຫັນ ແລະ ປະກອບເອກະສານ ເພີ່ມເຕີມຕາມລະບຽບການ ຂອງຂະແໜງການ, ພະແນກການນັ້ນ.
2. ເມື່ອເອກະສານຄົບຖ້ວນ ພະແນກແຜນການ - ການລົງທຶນ ນຳສະເໜີຕໍ່ຄະນະກຳມະການ ຄຸ້ມຄອງການລົງທຶນ ຂັ້ນແຂວງຄົ້ນຄ້ວາ ແລະ ພິຈາລະນາ.
3. ຫຼັງຈາກນັ້ນ ພະແນກອຸດສາຫະກຳ ແລະ ການຄ້າ ຈຶ່ງອອກໃບທະບຽນ ວິສາຫະກິດ.
4. ສາມາດເຮັດສັນຍາ ດຳເນີນກິດຈະການໄດ້ ໂດຍຜ່ານການຢັ້ງຢືນ ຈາກໜ່ວຍງານທະບຽນສານ.

**ມາດຕາ 18. ການກໍານົດເວລາ ຂອງການນໍາໃຊ້ໃບອະນຸຍາດ**

ພາຍຫຼັງໄດ້ຮັບອະນຸຍາດແລ້ວ ຕ້ອງໄດ້ລົງມືຈັດຕັ້ງປະຕິບັດ ພາຍໃນກໍານົດ 12 ເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຖ້າກາຍ ກໍານົດເວລາທີ່ໄດ້ອະນຸຍາດ ຜູ້ຂໍອະນຸຍາດ ຕ້ອງໄດ້ຂໍຕໍ່ ໃບອະນຸຍາດດັ່ງກ່າວຕື່ມ ກໍານົດເວລານໍາໃຊ້ໄດ້ 12 ເດືອນ.

## ໝວດທີ 4
## ສິດ ແລະ ໜ້າທີ່ ການຄຸ້ມຄອງ

**ມາດຕາ 19. ສິດ ແລະ ໜ້າທີ່ ຂອງຄະນະກໍາມະການກວດກາ ແລະ ການຄຸ້ມຄອງຊັບພະຍາກອນ ທໍາມະຊາດ ທີ່ເປັນຢາຂັ້ນແຂວງ**

1. ເປັນເສນາທິການ ໃຫ້ແກ່ລັດຖະບານ, ອົງການປົກຄອງແຂວງ, ສາມາດຮຽກປະຊຸມ ບັນດາພາກສ່ວນທີ່ກ່ຽວຂ້ອງ, ສະຫຼຸບລາຍງານ, ຕີລາຄາປະເມີນຜົນ ການປະຕິບັດວຽກງານ ເພື່ອລາຍງານຂັ້ນເທິງ.
2. ປະສານງານ ກັບການຈັດຕັ້ງຂັ້ນເທິງ ທີ່ກ່ຽວຂ້ອງເພື່ອຂໍທິດຊີ້ນໍາ ໃນການຈັດຕັ້ງປະຕິບັດ.
3. ຕິດຕາມກວດກາ ຊຸກຍູ້ຕໍ່ບຸກຄົນ, ນິຕິບຸກຄົນ, ຫ້າງຮ້ານ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງ ກັບຊັບພະຍາກອນທໍາມະຊາດ ທີ່ເປັນຢາພື້ນເມືອງ ພາຍໃນແຂວງ.
4. ຄົ້ນຄ້ວາ ເພື່ອສະເໜີອອກອະນຸຍາດ ດໍາເນີນ ຫຼື ຢຸດຕິກິດຈະການຕ່າງໆ ທີ່ເຮັດທຸລະກິດ ກ່ຽວກັບຊັບພະຍາກອນທໍາມະຊາດ ທີ່ເປັນຢາພື້ນເມືອງ ຂອງບຸກຄົນ, ນິຕິບຸກຄົນ
5. ການເຄື່ອນຍ້າຍຊັບພະຍາກອນ ທໍາມະຊາດທີ່ເປັນຢາ ທີ່ໄດ້ຮັບອະນຸຍາດຂຸດຄົ້ນ, ນໍາໃຊ້ ຖ້າເຄື່ອນຍ້າຍໄປຕ່າງແຂວງ ແລະ ຕ່າງປະເທດ ຈະຕ້ອງໄດ້ຮັບການຢັ້ງຢືນ ເຫັນດີຈາກຄະນະກໍາມະການກວດກາ ແລະ ຄຸ້ມຄອງຊັບພະຍາກອນ ທໍາມະຊາດທີ່ເປັນຢາຂັ້ນແຂວງ; ຖ້າເຄື່ອນຍ້າຍໄປຕ່າງເມືອງ ຈະຕ້ອງໄດ້ຮັບການຢັ້ງຢືນເຫັນດີ ຈາກຄະນະກໍາມະການກວດກາ ແລະ ຄຸ້ມຄອງຊັບພະຍາກອນທໍາມະຊາດ ທີ່ເປັນຢາຂັ້ນເມືອງ.

**ມາດຕາ 20. ສິດ ແລະ ໜ້າທີ່ ຂອງພະແນກ ສາທາລະນະສຸກແຂວງ**

1. ກໍານົດ, ຈັດປະເພດ ແລະ ຊະນິດຊັບພະຍາກອນທໍາມະຊາດ ທີ່ເປັນຢາ ທີ່ຫາໄດ້ຍາກ, ມີຄຸນ ຄ່າທາງດ້ານເສດຖະກິດ ເພື່ອປົກປັກຮັກສາ, ພັດທະນາ ແລະ ຂະຫຍາຍແນວພັນ ຊັບພະຍາກອນທໍາມະຊາດທີ່ເປັນຢາ.
2. ຄຸ້ມຄອງການຂຸດຄົ້ນ, ການນໍາໃຊ້ ແລະ ການອະນຸລັກ ແຫຼ່ງຊັບພະຍາກອນທໍາມະຊາດ ທີ່ເປັນຢາ ໃນຂອບເຂດທ້ອງຖິ່ນ ຂອງຕົນ.
3. ດໍາເນີນການສໍາຫຼວດ ແລະ ຂຶ້ນບັນຊີແຫຼ່ງຊັບພະຍາກອນ ທໍາມະຊາດທີ່ເປັນຢາ, ໂດຍສະເພາະພືດ ແລະ ຕົ້ນໄມ້ທີ່ເປັນຢາ ຊຶ່ງມີຢູ່ໃນທ້ອງຖິ່ນ ຂອງຕົນ, ເອົາໃຈໃສ່ກ່ຽວກັບຕົ້ນຢາທີ່ມີໜ້ອຍ, ມີທ່າອ່ຽງທີ່ຈະສູນພັນ ຫຼື ມີການເກັບກູ້ເປັນຈໍານວນຫຼາຍ ເພື່ອສະເໜີຈັດເພີ່ມເຂົ້າໃນບັນຊີ ຂອງຕົ້ນຢາທີ່ຈະຕ້ອງອະນຸລັກຮັກສາ.
4. ຈັດຕັ້ງປະຕິບັດລະບຽບການ ແລະ ມາດຕະການ ທີ່ອົງການຄຸ້ມຄອງ, ປົກປັກຮັກສາຊັບພະຍາ ກອນທໍາມະຊາດທີ່ເປັນຢາ ຂັ້ນສູນກາງວາງອອກ.

5. ໃຫ້ຂໍ້ມູນ ຕໍ່ອົງການປົກຄອງແຂວງ, ໃນວຽກງານຄຸ້ມຄອງ, ຂຸດຄົ້ນ, ສໍາຫຼວດ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ ທີ່ເປັນຢາ.
6. ປະສານສົມທົບ ກັບພະແນກກະສິກໍາ ແລະ ປ່າໄມ້ແຂວງ, ພະແນກການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ
7. ລາຍງານກ່ຽວກັບການຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ ໃຫ້ອົງການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນທໍາມະຊາດ ທີ່ເປັນຢາຂັ້ນສູນກາງ ຢ່າງເປັນ ປົກກະຕິ.
8. ສະເໜີກະຊວງສາທາລະນະສຸກ ອອກໃບອະນຸຍາດດ້ານວິຊາສະເພາະ ກ່ຽວກັບການດໍາເນີນ ທຸລະກິດ ໂຮງງານປຸງແຕ່ງ, ໂຮງງານຖອດຣິດ, ຫ້ອງປຸງແຕ່ງ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ.
9. ສະເໜີ ກະຊວງສາທາລະນະສຸກ ອອກໃບອະນຸຍາດກ່ຽວກັບ ການດໍາເນີນທຸລະກິດ ເກັບຊື້, ຂຸດຄົ້ນ, ນໍາເຂົ້າ - ສົ່ງອອກ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ.
10. ສະເໜີ ກະຊວງສາທາລະນະສຸກ ອອກໃບອະນຸຍາດໂກຕາ ການຂຸດຄົ້ນຊັບພະຍາກອນ ທໍາມະຊາດທີ່ເປັນຢາ
11. ຄຸ້ມຄອງ, ຕິດຕາມ, ກວດກາຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດໃນການເກັບຊື້, ຂຸດຄົ້ນ, ນໍາໃຊ້, ນໍາເຂົ້າ - ສົ່ງອອກ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ.
12. ປະສານງານ ກັບຂະແໜງການອື່ນ ໃນການຈັດຕັ້ງປະຕິບັດ ນິຕິກໍາທີ່ກ່ຽວຂ້ອງ ກັບຊັບພະຍາກອນ ທໍາມະຊາດທີ່ເປັນຢາ.
13. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ.

**ມາດຕາ 21. ສິດ ແລະ ໜ້າທີ່ ຂອງພະແນກ ກະສິກໍາ ແລະ ປ່າໄມ້**

1. ປະສານສົມທົບ ກັບພະແນກສາທາລະນະສຸກແຂວງ, ພະແນກການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ, ເກັບຊື້ ແລະ ປົກປັກຮັກສາຊັບພະຍາກອນ ທໍາມະຊາດທີ່ເປັນຢາ ຫຼື ເຄື່ອງປ່າ ຂອງດົງທີ່ເປັນຢາ.
2. ຄົ້ນຄ້ວາ ພິຈາລະນະໃບສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຈຸດປະສົງ ຂຸດຄົ້ນ.
3. ອອກໃບອະນຸຍາດ ຕາມລະບຽບກົດໝາຍ.
4. ການອອກອະນຸຍາດຂຸດຄົ້ນ, ເກັບຊື້ເຄື່ອງປ່າຂອງດົງ ທີ່ນອນຢູ່ໃນບັນຊີ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ ຕາມດໍາລັດເລກທີ 155/ນຍ ລົງວັນທີ 30 ກັນຍາ 2003. ແມ່ນຕ້ອງໄດ້ປະສານສົມທົບ ກັບພະແນກສາທາລະນະສຸກ ເປັນຜູ້ສະເໜີ ຕໍ່ກະຊວງສາທາລະນະສຸກ ອອກໃບອະນຸມັດ, ອອກໃບອະນຸຍາດ.
5. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ.

**ມາດຕາ 22. ສິດ ແລະ ໜ້າທີ່ ຂອງພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ**

1. ປະສານສົມທົບ ກັບພະແນກສາທາລະນະສຸກແຂວງ, ພະແນກການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາຊັບພະຍາກອນ ທໍາມະຊາດທີ່ເປັນຢາ.
2. ຕິດຕາມ, ກວດກາ ແລະ ຄຸ້ມຄອງ ຫົວໜ່ວຍທຸລະກິດ ຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ
3. ຄົ້ນຄ້ວາ ອອກໃບຢັ້ງຢືນສິ່ງແວດລ້ອມໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດອື່ນໆ ເມື່ອເຫັນວ່າມີຄວາມເໝາະສົມ

4. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ

**ມາດຕາ 23. ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ**

1. ຈັດຕັ້ງເຜີຍແຜ່ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນຢ່າງມີປະສິດທິຜົນ.
2. ສະເໜີກ່ຽວກັບການສ້າງຕັ້ງ, ໂຈະ ຫຼື ຍົກເລີກ ຫົວໜ່ວຍທຸລະກິດ ກ່ຽວກັບຊັບພະຍາກອນ ທໍາມະຊາດ ທີ່ເປັນຢາ ຕໍ່ພະແນກສາທາລະນະສຸກແຂວງ ເພື່ອພິຈາລະນາ ນໍາສະເໜີຕໍ່ ກະຊວງສາທາລະນະສຸກ.
3. ພິຈາລະນາແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການຄຸ້ມຄອງ, ກວດກາ, ຄຸນນະພາບ, ມາດຕະຖານຂອງຜະລິດຕະພັນຈາກຊັບພະຍາກອນທໍາມະຊາດທີ່ເປັນຢາ ຕາມພາລະບົດບາດຂອງຕົນ.
4. ປະສານສົມທົບ ກັບຫ້ອງການອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ກວດກາຢາ ແລະ ຜະລິດຕະພັນຈາກຊັບພະຍາກອນ ທໍາມະຊາດທີ່ເປັນຢາ ເພື່ອເຮັດໃຫ້ຂໍ້ຕົກລົງສະບັບນີ້ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ.
5. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕໍ່ພະແນກສາທາລະນະສຸກແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ.
6. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ.

**ມາດຕາ 24. ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ**

1. ປະສານສົມທົບກັບ ຫ້ອງການສາທາລະນະສຸກເມືອງ, ຫ້ອງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ, ເກັບຊື້ ແລະ ປົກປັກຮັກສາຊັບພະຍາກອນ ທໍາມະຊາດທີ່ເປັນຢາ ຫຼື ເຄື່ອງປ່າ ຂອງດົງທີ່ເປັນຢາ.
2. ຄົ້ນຄ້ວາ ແລະ ນໍາສະເໜີສາຍຕັ້ງຂອງຕົນ ເພື່ອອອກໃບອະນຸຍາດໃຫ້ແກ່ ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ເພື່ອດໍາເນີນທຸລະກິດ ຕາມຄວາມຮັບຜິດຊອບ.
3. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ**

1. ຈັດຕັ້ງເຜີຍແຜ່ບັນດານິຕິກໍາ ທີ່ກ່ຽວຂ້ອງກັບຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ ຕາມຄວາມຮັບຜິດຊອບ ຂອງຕົນ.
2. ປະສານສົມທົບກັບ ຫ້ອງການສາທາລະນະສຸກເມືອງ, ຫ້ອງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາຊັບພະຍາກອນ ທໍາມະຊາດທີ່ເປັນຢາ.
3. ຕິດຕາມ, ກວດກາ ແລະ ຄຸ້ມຄອງ ຫົວໜ່ວຍທຸລະກິດ ຕາມກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ.
4. ຄົ້ນຄ້ວາ ແລະ ນໍາສະເໜີສາຍຕັ້ງ ຂອງຕົນເພື່ອອອກໃບຢັ້ງຢືນ ສິ່ງແວດລ້ອມໃຫ້ແກ່ບຸກຄົນ ນິຕິບຸກຄົນ, ຫົວໜ່ວຍທຸລະກິດອື່ນໆ.
5. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງ**

1. ຄົ້ນຄ້ວາຜັນຂະຫຍາຍ ບັນດາກົດໝາຍ, ດໍາລັດ, ຂໍ້ຕົກລົງ, ມະຕິຄໍາສັ່ງ ທີ່ພົວພັນ ຂອງຂະແໜງການທີ່ກ່ຽວຂ້ອງ.

2. ເຜີຍແຜ່, ສຶກສາອົບຮົມ, ເຕົ້າໂຮມຄວາມເປັນເອກະພາບ ຂອງຂະແໜງການທີ່ກ່ຽວຂ້ອງ ໃນຂອບເຂດ ເມືອງຮັບຜິດຊອບ ກ່ຽວກັບການຈັດຕັ້ງປະຕິບັດ ລະບຽບການຄຸ້ມຄອງ, ນໍາໃຊ້ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ
3. ປຸກລະດົມຂົນຂວາຍ ການມີສ່ວນຮ່ວມ ຂອງປະຊາຊົນທຸກຊັ້ນຄົນ ທີ່ດໍາລົງຊີວິດ ຢູ່ພາຍໃນເມືອງ ກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 27. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

1. ເປັນເສນາທິການໃຫ້ສຸກສາລາ, ຫ້ອງການສາທາລະນະສຸກເມືອງ ແລະ ພະແນກສາທາລະນະສຸກແຂວງ.
2. ເປັນເຈົ້າການຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ ເຜີຍແຜ່ໃຫ້ປະຊາຊົນ ໄດ້ເຂົ້າໃຈຢ່າງເລິກເຊິ່ງ .
3. ຕິດຕາມກວດກາ ການເຄື່ອນໄຫວເກັບຊື້, ຂຸດຄົ້ນ ຊັບພະຍາກອນທໍາມະຊາດທີ່ເປັນຢາ ຂອງບຸກຄົນ, ນິຕິບຸກຄົນ ທີ່ເຂົ້າມາຂຸດຄົ້ນ ຫຼື ເກັບຊື້ ຢູ່ໃນຂອບເຂດການປົກຄອງ ຂອງບ້ານ.
4. ເປັນເຈົ້າການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

## ໝວດທີ 5
## ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບອະນຸຍາດ

**ມາດຕາ 28. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຂຸດຄົ້ນ ຫຼື ເກັບກູ້ພືດພັນ ແລະ ລ່າສັດທີ່ເປັນຢາ ເພື່ອນໍາໃຊ້ເຂົ້າໃນການຜະລິດ ແລະ ຈໍາໜ່າຍ ທັງຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງປະຕິບັດພັນທະຕາມຂໍ້ຕົກລົງ ສະບັບນີ້.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 29. ຂໍ້ຫ້າມກ່ຽວກັບສວນອານຸລັກ ຊັບພະຍາກອນທໍາມະຊາດທີ່ເປັນຢາ**

1. ຫ້າມບຸກລຸກ, ຍ້າຍລັກໝາຍເຂດແດນ, ຖາງປ່າທໍາການຜະລິດຕ່າງໆ ຢູ່ບໍລິເວນຂອບເຂດ ສວນອານຸລັກເດັດຂາດ.
2. ຫ້າມຂຸດຄົ້ນໄມ້ຊະນິດຕ່າງໆ ຢູ່ໃນຂອບເຂດ ຂອງສວນ ຢ່າງເດັດຂາດ.
3. ຫ້າມລ່າສັດທຸກປະເພດ ດ້ວຍວິທີການຕ່າງໆ ຢູ່ໃນບໍລິເວນ ຂອງສວນຕາມລໍາພັງ ຢ່າງເດັດຂາດ.
4. ຫ້າມບໍ່ໃຫ້ຕັ້ງສະຖານທີ່ ເພື່ອລ້ຽງສັດ, ສັດລ້ຽງຊະນິດຕ່າງໆ ຢູ່ບໍລິເວນຂອບເຂດ ຂອງສວນອານຸລັກຢ່າງເດັດຂາດ.

**ມາດຕາ 30. ຂໍ້ຫ້າມບຸກຄົນ ຫຼື ນິຕິບຸກຄົນ**

1. ຫ້າມເດີນສໍາຫຼວດ, ຂຸດຄົ້ນ ແລະ ທໍາການຜະລິດປຸງແຕ່ງ ຊັບພະຍາກອນທໍາມະຊາດ ທີ່ເປັນຢາ.

2. ຫ້າມບຸກລຸກ ທຳລາຍຊັບພະຍາກອນ ທຳມະຊາດທີ່ເປັນຢາ ໃນທຳມະຊາດ ແລະ ເຂດອານຸລັກ ຫວງຫ້າມເດັດຂາດ.
3. ຫ້າມຈັບຈອງທີ່ດິນ, ປ່າ ທີ່ມີຊັບພະຍາກອນທຳມະຊາດ ທີ່ເປັນຢາ.
4. ຫ້າມຂຸດຄົ້ນ, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ເກີນກ່ວາໂກຕາທີ່ອະນຸມັດ.
5. ຫ້າມທຳລາຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາດ້ວຍການບຸກລຸກ, ບຸກເບີກ, ຖາກຖາງປ່າ, ໃຊ້ສານເຄມີ ຫຼື ດ້ວຍການກະທຳອື່ນໆ.
6. ຫ້າມຂຸດຄົ້ນ, ເກັບຊື້, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ປະເພດຫວງຫ້າມເດັດຂາດ
7. ຫ້າມຮ່ວມມືກັບນັກທຸລະກິດ ເພື່ອຂຸດຄົ້ນ, ເກັບຊື້, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດທີ່ເປັນຢາໂດຍ ເດັດຂາດ

**ມາດຕາ 31. ຂໍ້ຫ້າມສຳລັບພະນັກງານ ແລະ ການຈັດຕັ້ງ**

1. ຫ້າມບຸກຄົນ, ນິຕິບຸກຄົນ ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ເພື່ອຜູ້ອື່ນ
2. ຫ້າມດຳເນີນທຸລະກິດຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ດ້ວຍຕົນເອງ ຫຼື ມີຫຸ້ນສ່ວນ ໂດຍບໍ່ໄດ້ຮັບອະນຸຍາດ.
3. ຫ້າມອະນຸຍາດເກັບກູ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາໂດຍບໍ່ຜ່ານພາກສ່ວນ ທີ່ກ່ຽວຂ້ອງ.
4. ຫ້າມຂັດຂວາງ ການປະຕິບັດວຽກງານ ຂອງເຈົ້າໜ້າທີ່.
5. ຫ້າມພະນັກງານ ກົດໜ່ວງຖ່ວງດຶງ ເອກະສານກ່ຽວກັບການຂຸດຄົ້ນ, ຊື້ຂາຍ, ເຄື່ອນຍ້າຍຊັບພະຍາກອນທຳມະຊາດ ທີ່ເປັນຢາ.
6. ຫ້າມການຈັດຕັ້ງ ທີ່ບໍ່ກ່ຽວຂ້ອງ ນຳພາຂຸດຄົ້ນ, ຊື້ຂາຍ, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ.
7. ຫ້າມອອກຂໍ້ຕົກລົງ ອະນຸຍາດ, ອະນຸມັດ ຂຸດຄົ້ນ ,ຊື້ຂາຍ, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ເຊິ່ງຜູ້ມີສິດອະນຸຍາດ, ອະນຸມັດ ແມ່ນກະຊວງສາທາລະນະສຸກ ໂດຍຜ່ານການເດີນສຳຫຼວດປະເມີນຜົນ ຈາກພະແນກສາທາລະນະສຸກ.

## ໝວດທີ 7
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32. ນະໂຍບາຍຕໍ່ຜູ້ມີຜົນງານ**

1. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນ ປົກປັກຮັກສາແຫຼ່ງຊັບພະຍາ ກອນທຳມະຊາດທີ່ເປັນຢາ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.
2. ບຸກຄົນໃດຫາກພົບເຫັນ ຫຼື ໃຫ້ຂໍ້ມູນກ່ຽວກັບການຂຸດຄົ້ນ, ຊື້ຂາຍ, ເຄື່ອນຍ້າຍຊັບພະຍາກອນ ທຳມະຊາດ ທີ່ເປັນຢາໂດຍບໍ່ໄດ້ຮັບອະນຸຍາດ ແລ້ວລາຍງານຕໍ່ເຈົ້າໜ້າທີ່ ຈະໄດ້ຮັບນະໂຍບາຍ 10% ຂອງມູນຄ່າການປັບໃໝ.

**ມາດຕາ 33. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງໃດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດຳເນີນຄະດີຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 34. ມາດຕະການປັບໃໝ**

ບຸກຄົນ ຫຼື ການຈັດຕັ້ງໃດຫາກໄດ້ຂຸດຄົ້ນ, ຊື້ຂາຍ, ເຄື່ອນຍ້າຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ໂດຍບໍ່ຖືກຕ້ອງ ຕາມກົດໝາຍຈະຖືກປັບໃໝ ແຕ່ 100,000 ກີບ ຫາ 1,000,000 ກີບ

ກໍລະນີທີ່ມີ ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະໄດ້ປະຕິບັດໂທດ ຕາມກົດໝາຍອາຍາ ແລະ ຈະຖືກປັບໃໝແຕ່ 500,000 ກີບ ຫາ 5,000,000 ກີບ .

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 35. ມາດຕະການຈັດຕັ້ງປະຕິບັດ**

1. ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດທີ່ຈະຂຸດຄົ້ນ, ນຳໃຊ້ ຊັບພະຍາກອນທຳມະຊາດ ທີ່ເປັນຢາ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການ ສາທາລະນະສຸກເສຍກ່ອນ ຈຶ່ງສາມາດດຳເນີນການຂຸດຄົ້ນ, ນຳໃຊ້ໄດ້
2. ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດທີ່ໄດ້ຮັບອະນຸຍາດຂຸດຄົ້ນ, ນຳໃຊ້ ຊັບພະຍາກອນ ທຳມະຊາດທີ່ເປັນຢາ ຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງ ຕາມຫຼັກວິຊາການ ແລະ ຕ້ອງມີແຜນການ ປູກທົດແທນຄືນ ເພື່ອຫຼີກເວັ້ນການຂຸດຄົ້ນ ທີ່ຈະເຮັດໃຫ້ຊັບພະຍາກອນ ທຳມະຊາດສູນພັນ ຫຼື ສ່ຽງຕໍ່ການສູນພັນ.
3. ການຂຸດຄົ້ນ, ນຳໃຊ້ຈະຕ້ອງປະຕິບັດ ໄປຄຽງຄູ່ກັບການຮັກສາສິ່ງແວດລ້ອມ ດ້ວຍຄວາມຮັບຜິດຊອບສູງ

**ມາດຕາ 36. ການຈັດຕັ້ງປະຕິບັດ**

1. ມອບໃຫ້ຄະນະກຳມະການ ກວດກາ ແລະ ຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ເປັນຢາຂັ້ນແຂວງ, ຂັ້ນເມືອງ ເປັນເຈົ້າການ ປະສານສົມທົບກັບຂະແໜງການ ກ່ຽວຂ້ອງ ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ພະແນກສາທາລະນະສຸກ ສົມທົບກັບບັນດາຂະແໜງການ ທີ່ກ່ຽວຂ້ອງ ແລະ ບັນດາເມືອງໃນທົ່ວແຂວງ ເປັນເຈົ້າການຮັບຜິດຊອບ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 37. ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍ ເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ພົງສະຫວັນ ສິດທະວົງ